**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພະແນກ ໂຍທາທິການ ແລະ ຂົນສົ່ງ

ເລກທີ...1857/ຍທຂ.ສຂ

ສະຫວັນນະເຂດ, ວັນທີ...16 ມີນາ 2026

# ໜັງສືແຈ້ງເຊີນເຂົ້າຮ່ວມການປະມູນ

- ອີງຕາມ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017;
- ອີງຕາມ ຄຳແນະນຳກ່ຽວກັບການ ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
- ອີງຕາມ ຂໍ້ຕົກລົງຂອງ ທ່ານເຈົ້າແຂວງສະຫວັນນະເຂດ ສະບັບເລກທີ 1491/ສຂ, ລົງວັນທີ 10 ກໍລະກົດ 2023 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ;
- ອີງຕາມ ແຈ້ງການຂອງພະແນກການເງິນແຂວງ ເລື່ອງແຈ້ງແຜນການລົງທຶນຂອງລັດ ປະຈຳປີ 2026 (ໂຄງການປະເພດ V ມູນຄ່າ 50 ຕື້ກີບລົງມາ ແຂວງຈັດສັນ) ສະບັບເລກທີ 452/ກງຂ, ລົງວັນທີ 20 ກຸມພາ 2026.
- ອີງຕາມ ຄຳເຫັນຂອງຄະນະພະແນກ ໂຍທາທິການ ແລະ ຂົນສົ່ງ ຄັ້ງວັນທີ 20 ກຸມພາ 2026.

ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງສະຫວັນນະເຂດ ໄດ້ຮັບແຈ້ງການ ຂອງພະແນກການເງິນ ແຂວງ ແຂວງ ເລື່ອງແຈ້ງແຜນການລົງທຶນຂອງລັດ ປະຈຳປີ 2026 (ໂຄງການປະເພດ V ມູນຄ່າ 50 ຕື້ກີບລົງມາ ແຂວງຈັດສັນ) ສະບັບເລກທີ 452/ກງຂ, ລົງວັນທີ 20 ກຸມພາ 2026, ສະນັ້ນ, ຈຶ່ງຂໍຖືເປັນກຽດເຊີນບັນດາທ່ານບໍລິສັດທີ່ສົນໃຈ ແລະ ມີເງື່ອນໄຂເຂົ້າຮ່ວມການແຂ່ງຂັນປະມູນ ການກໍ່ສ້າງ ແລະ ສ້ອມແປງ ດ້ວຍທຶນຂອງລັດ ປະຈຳປີ 2026 ຊຶ່ງປະກອບມີທັງໝົດ 06 ໂຄງການ, ນຳໃຊ້ທຶນໂຄງການປົກກະຕິ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

## ຕາຕະລາງ ສັນຍາ ແລະ ຈຸດທີ່ຕັ້ງຂອງໂຄງການ

| ລ/ດ | ເລກທີສັນຍາ | ເລກເສັ້ນທາງ | ຊື່ໂຄງການ | ລວງຍາວ | ປະເພດໜ້າວຽກ |
|---|---|---|---|---|---|
| ກ. | ທຶນໂຄງການປົກກະຕິ | | | | |
| 1 | CHP02-2026-RM-DN09-02 | PR-6303 | ຄທ ກໍ່ສ້າງທໍ່ຫຼູມ ( BOXCONVERT ) ຫ້ວຍເລີງທົ່ມ ຂະໜາດ 4 ຊ່ອງ ກວ້າງ 5 ແມັດ, ສູງ 4 ແມັດ, ຕາມເສັ້ນທາງເລກທີ PR6303 (ກມ 11+900 ) ເຂດເມືອງຈຳພອນ | 20 ແມັດ | ທໍ່ຫຼູມ |
| 2 | CHP03-2026-RM-DN09-03 | PR-6303 | ຄທ ກໍ່ສ້າງທໍ່ຫຼູມ ( BOXCONVERT ) ຫ້ວຍຕະໄອຍ ຂະໜາດ 4 ຊ່ອງ ກວ້າງ 5 ແມັດ, ສູງ 4 ແມັດ, ຕາມເສັ້ນທາງເລກທີ PR6303 (ກມ 11+600 ) ເຂດເມືອງຈຳພອນ | 20 ແມັດ | ທໍ່ຫຼູມ |
| 3 | CHP04-2026-RM-DN09-04 | PR-6303 | ຄທ ກໍ່ສ້າງຂົວເບຕົງເສີມເຫຼັກອັດແຮງ ຫ້ວຍໝາກບ້າ (ກມ 2+500) ລວງຍາວ 24 ແມັດ, ກວ້າງ 9 ແມັດ ຕາມເສັ້ນທາງເລກທີ PR 6303 ແຕ່ແຍກທາງ13 ໃຕ້ ບ້ານຫຼັກ35 ຫາ ບ້ານແກ້ງກອກ ເມືອງຈຳພອນ ແຂວງສະຫວັນນະເຂດ | 24 ແມັດ | ຂົວເບຕົງເສີມເຫຼັກ |
| 4 | PH01-2026-RM-DN04-01 | RR-6681 | ຄທ ຍົກລະດັບເສັ້ນທາງເລກທີ RR 6681 ແຕ່ແຍກທາງ DR 6455 ບ້ານອາເລົາເກົ່າ - ຈຸດສຸມຫ້ວຍທອຍ, ລວງຍາວ 11.8 ກມ, ບ້ານອາເລົາເກົ່າ - ອາເລົາໃໝ່ ແລະ ບ້ານແກ້ງໄຊ ຫາ ບ້ານເຊຍ ເຂດເມືອງພີນ | 11.8 ກິໂລແມັດ | ທາງດິນແດງ |
| 5 | XP01-2026-RM-DN05-01 | RR-6808 | ຄທ ກໍ່ສ້າງເສັ້ນທາງ RR 6808 ປູຢາງ 02 ຊັ້ນ, ຊ່ວງກ້ອຍຊັນ ປູດ້ວຍເບຕົງເສີມເຫຼັກ ແຕ່ແຍກທາງເລກທີ DR 6325 ບ້ານໃໝ່ທ່າແດງ ຫາ ແຍກທາງ RR 6809 ບ້ານກະລາກ ຊ່ວງ ກມ 20+000 ຫາ ກມ 29+300, ລວງຍາວ 9.3 ກມ , ກວ້າງ 6 ແມັດ ເມືອງເຊໂປນ ແຂວງສະຫວັນນະເຂດ | 9.3 ກິໂລແມັດ | ທາງປູຢາງ ແລະ ທາງເບຕົງ |
| 6 | PLX02-2026-RM-DN15-UR-02 | UR | ຄທ ຍົກລະດັບເສັ້ນທາງດິນແດງຕາຜ້າເຂດເມືອງພະລານໄຊ ( ໄລຍະທີ1 ) | 6 ກິໂລແມັດ | ທາງດິນແດງ |

1. ການປະມູນຈະດຳເນີນຕາມຮູບແບບ ແລະ ຂັ້ນຕອນ ການປະມູນເປີດກ້ວາງ (ພາຍໃນ) ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການ ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
2. ການປະມູນນີ້ແມ່ນອະນຸຍາດໃຫ້ທຸກໆ ບໍລິສັດ ທີ່ມີເງື່ອນໄຂ, ມີໃບອະນຸຍາດດຳເນີນທຸລະກິດ ກໍ່ສ້າງ, ສ້ອມແປງຂົວທາງ ຖືກຕ້ອງຕາມກົດໝາຍ;
3. ບໍລິສັດ ທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນສອບຖາມຂໍ້ມູນເພີ່ມເຕີມໄດ້ຕາມທີ່ຢູ່ລຸ່ມນີ້ ໃນໂມງລັດຖະການ: ຂະແໜງຂົວທາງ, ພະແນກ ໂຍທາທິການ ແລະ ຂົນສົ່ງ ໂທລະສັບ: 020 55199951, E-mail: dpwt.svk@gmail.com;
4. ເອກະສານປະມູນ ສາມາດຊື້ໄດ້ຢູ່ ຂະແໜງຈັດຊື້-ຈັດຈ້າງ, ພະແນກການເງິນແຂວງ ໂທລະສັບ: 020 55656296, ຕາມໂມງລັດຖະການ, ໃນລາຄາ 1,000,000 ກີບ/ຊຸດ (ໜຶ່ງລ້ານກີບ) ໂດຍບໍ່ມີການທົດແທນຄືນ;
5. ເອກະສານປະມູນຕ້ອງສົ່ງເຖິງ ຂະແໜງຂົວທາງ, ພະແນກ ໂຍທາທິການ ແລະ ຂົນສົ່ງ ກ່ອນເວລາ 9:00 ໂມງ ຂອງວັນທີ 24 ເມສາ (04) 2026 ຢູ່ທີ່ຫ້ອງປະຊຸມເບີ 01 ຊັ້ນ 03 ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງສະຫວັນນະເຂດ, ຊອງປະມູນຈະໄດ້ເປີດໃນເວລາ 09:00 ໂມງ ຂອງວັນດຽວກັນ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນຳ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ ຈະບໍ່ຖືກຮັບຮອງ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ;
6. ເອກະສານປະມູນ ຕ້ອງປະກອບໜັງສືຄ້ຳປະກັນການປະມູນມາພ້ອມ ຫຼື ດ້ວຍເງິນສົດ, ໜັງສືຄ້ຳປະກັນອອກໂດຍທະນາຄານ ພາຍໃນ ຫຼື ຕ່າງປະເທດ ຫຼື ສະຖາບັນປະກັນໄພ, ໃນມູນຄ່າ (ບໍ່ໃຫ້ຫຼຸດ 2% ຂອງມູນຄ່າຢູ່ເອກະສານການປະມູນ);
7. ຜູ້ສົນໃຈເຂົ້າຮ່ວມປະມູນສາມາດລົງກວດກາສະໜາມຕົວຈິງດ້ວຍຕົນເອງ ຕາມລາຍລະອຽດຂອງແຕ່ລະສັນຍາ ແລະ ກອງປະຊຸມກ່ອນຍື່ນຊອງປະມູນຈະໄດ້ຈັດຂຶ້ນໃນວັນທີ 10 ເມສາ (04) 2026 ຢູ່ທີ່ຫ້ອງປະຊຸມເບີ 01 ຊັ້ນ 3 ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງສະຫວັນນະເຂດ ເລີ່ມແຕ່ເວລາ 9:00 ໂມງ ເປັນຕົ້ນໄປ.

ດັ່ງນັ້ນ, ຈິ່ງຮຽນເຊີນມາຍັງທ່ານ ເພື່ອຊັບຊ້ອນເວລາເຂົ້າຮ່ວມການແຂ່ງຂັນປະມູນຕາມວັນເວລານີ້ດ້ວຍ.

**ຫົວໜ້າພະແນກ**

ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງສະຫວັນນະເຂດ

**ຄຳພອງ ສົມວິຈິດ**